ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 1813 /ກຈພ
ນະຄອນຫຼວງວຽງຈັນ, ວັນທີ 11-09-2024

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

**ເລື່ອງ: ຄັດເລືອກພະນັກງານເຂົ້າຮ່ວມສະໝັກທຶນການສຶກສາ ຂອງໂຄງການທຶນການສຶກສາເພື່ອພັດທະນາຊັບພະຍາກອນມະນຸດ ໂດຍທຶນຊ່ວຍເຫຼືອລ້າ ຂອງລັດຖະບານຍີ່ປຸ່ນ ປີ 2024 (The Project for Human Resources Development Scholarship by Japanese Grant Aid - JDS 2024).**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການຂອງ ຫ້ອງການ, ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4499/ຫກ, ລົງວັນທີ 26 ສິງຫາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຄັດເລືອກເອົາພະນັກງານ-ລັດຖະກອນຜູ້ທີ່ມີເງື່ອນໄຂເໝາະສົມເຂົ້າຮ່ວມສະໝັກທຶນການສຶກສາຂອງໂຄງການທຶນການສຶກສາ ເພື່ອພັດທະນາຊັບພະຍາກອນມະນຸດ ໂດຍທຶນຊ່ວຍເຫຼືອລ້າ ຂອງລັດຖະບານຍີ່ປຸ່ນ (The Project for Human Resources Development Scholarship by Japanese Grant Aid - JDS 2024) ເພື່ອໄປສຶກສາຕໍ່ໃນລະດັບປະລິນຍາໂທ ແລະ ປະລິນຍາເອກ, ທີ່ ປະເທດ ຍີ່ປຸ່ນ ໃນສົກປີ 2025-2026 (ສຳລັບຜູ້ທີ່ຈະສະໝັກທຶນໃນລະດັບປະລິນຍາເອກ ແມ່ນສະເພາະຜູ້ທີ່ຮຽນຈົບລະດັບປະລິນຍາໂທຂອງ ທຶນ JDS ເທົ່ານັ້ນ) ແລະ ສາມາດເບິ່ງຂໍ້ມູນລາຍລະອຽດກ່ຽວກັບເງື່ອນໄຂຂອງທຶນ, ຂົງເຂດວິຊາຮຽນທີ່ສາມາດສະເໜີ, ບັນດາມະຫາວິທະຍາໄລ ທີ່ກ່ຽວຂ້ອງ ແລະ ຂັ້ນຕອນການສະໝັກທຶນ ແມ່ນສາມາດດາວໂຫຼດໄດ້ທີ່ເວັບໄຊ **https://jds-scholarship.org/** ຫຼື ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569, ສຳລັບພະນັກງານ-ລັດຖະກອນ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ສາມາດສະໝັກບັນດາມະຫາວິທະຍາໄລ ດັ່ງລຸ່ມນີ້:

1. International University of Japan (IUJ)
2. Hiroshima University
3. Doshisha University
4. Ritsumeikan University
5. Yamaguchi University
6. Rikkyo University
7. University of Tsukuba
8. Tohoku University

ເງື່ອນໄຂ ແລະ ວິທີການສະໝັກ:

- ລົງທະບຽນ ແລະ ດາວໂຫຼດເອກະສານສະໝັກທັງໝົດໄດ້ໃນເວບໄຊ (https://jds-scholarship.org/);
- ຕື່ມແບບຟອມອອນລາຍ ແລະ ອັບໂຫຼດເອກະສານປະກອບການສະໝັກທຶນໃນລິ້ງດ້ານເທິງ ກ່ອນວັນທີ **16 ຕຸລາ 2024;**
  - **ເອກະສານປະກອບມີ:**
    - ບົດ essay ສັ້ນ;
    - ແຜນບົດຄົ້ນຄວ້າ (Research Plan);
    - ສໍາເນົາໃບປະກາດ ແລະ ໃບຄະແນນຈົບມະຫາວິທະຍາໄລ(ພ້ອມຢັ້ງຢືນກາແດງໃສ່ໃນສະບັບສໍາເນົາ);
    - ໜັງສືອ້າງອີງຈາກຜູ້ຊີ້ນໍາບ່ອນເຮັດວຽກ (Reference Letter);
    - ໜັງສື Official Nomination Letter ຈາກກົມຈັດຕັ້ງ ແລະ ພະນັກງານ;

❖ ລະດັບປະລິນຍາໂທ

- ຜູ້ທີ່ຈະສະໝັກຕ້ອງຈົບການສຶກສາໃນລະດັບ ປະລິນຍາຕີ ຂຶ້ນໄປ ທັງພາຍໃນ ແລະ ຕ່າງປະເທດ;
- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸລະຫວ່າງ 22 - 39 ປີ;
- ຜູ້ສະໝັກຕ້ອງເປັນພະນັກງານ-ລັດຖະກອນ 02 ປີ ຂຶ້ນໄປ ຢູ່ ຂັ້ນສູນກາງ, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ( ສໍາລັບພະນັກງານ ຢູ່ບັນດາຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ ແມ່ນຍັງບໍ່ທັນອະນຸຍາດໃຫ້ສະໝັກ);
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາກເວົ້າ ແລະ ຂຽນ, ຖ້າມີຄະແນນ TOEFL 500, TOEIC 520, IELTS 4.5 ຂຶ້ນໄປ ຈະເປັນການດີ,
- ສໍາລັບຜູ້ທີ່ຈະສະໝັກເອົາທຶນຂອງມະຫາວິທະຍາໄລ Tsukuba, Hiroshima ແມ່ນໃຫ້ມີຄະແນນ TOEIC 520, TOEFL 500;
- ສໍາລັບຜູ້ທີ່ຈະສະໝັກເອົາທຶນຂອງມະຫາວິທະຍາໄລ Ritsumeikan ແມ່ນໃຫ້ມີຄະແນນ TOEIC 520, TOEFL 500, IELTS 4.5;
- ສໍາລັບຜູ້ທີ່ຈະສະໝັກເອົາທຶນຂອງມະຫາວິທະຍາໄລ Yamaguchi ແມ່ນໃຫ້ມີຄະແນນ TOEIC 730, TOEFL iBT 78, IELTS 5.5;
- ຜູ້ສະໝັກຕ້ອງບໍ່ໄດ້ຮັບທຶນການສຶກສາລະດັບປະລິນຍາໂທຈາກປະເທດອື່ນ;
- ຜູ້ສະໝັກແມ່ນບໍ່ໄດ້ຮັບທຶນ ຫຼື ມີແຜນຈະໄດ້ຮັບທຶນຈາກທຶນຊ່ວຍເຫຼືອອື່ນໆໃນໄລຍະທີ່ສະໝັກທຶນນີ້.
- ຜູ້ສະໝັກທີ່ເຄີຍສຶກສາຢູ່ຕ່າງປະເທດຫຼາຍກວ່າ 01 ປີ ແລະ ກັບຄືນມາ ສປປ ລາວ ບໍ່ຮອດ 02 ປີ ແມ່ນບໍ່ສາມາດສະໝັກໄດ້.

❖ ລະດັບປະລິນຍາເອກ

- ຜູ້ທີ່ຈະສະໝັກຕ້ອງເປັນຄົນສັນຊາດລາວ ອາຍຸບໍ່ເກີນ 45 ປີ ແລະ ໄດ້ເປັນນັກສຶກສາໄດ້ຮັບທຶນຂອງ JDS ມາແລ້ວ (ຈົບປະລິນຍາໂທ ຂອງທຶນ JDS);
- ຜູ້ສະໝັກຕ້ອງມີໜັງສືແນະນໍາ “Recommendation Letter” ຈາກຜູ້ຊີ້ນໍາຂອງກົມກອງທີ່ສັງກັດຢູ່;
- ຜູ້ສະໝັກຕ້ອງມີໜັງສືແນະນໍາ “Recommendation Letter” ຈາກມະຫາວິທະຍາໄລ ທີ່ຜູ້ກ່ຽວຈະສະໝັກເຂົ້າຮຽນ ແລະ ຕ້ອງໄດ້ວາງແຜນໂຄງຮ່າງບົດວິທະຍານິພົນມາພ້ອມ;
- ຜູ້ສະໝັກຈະຕ້ອງຍັງບໍ່ໄດ້ຮຽນຈົບລະດັບປະລິນຍາເອກຈາກຕ່າງປະເທດໂດຍທຶນຊ່ວຍເຫຼືອຂອງລັດຖະບານໃດໆ;

❖ ຕາຕະລາງການຄັດເລືອກ

- (ກ່ອນການຄັດເລືອກ) ສອບເສັງພາສາ IELTS ແລະ ຄະນິດສາດ ປະມານ ວັນທີ 21-23 ພະຈິກ 2024 (ຟຣີ);
- (ການຄັດເລືອກຮອບທີ 1) ຄັດເລືອກເອກະສານໂດຍ ອາຈານ ຈາກມະຫາວິທະຍາໄລ ໃນລະຫວ່າງເດືອນທັນວາ 2024 - ມັງກອນ 2025;
- (ການຄັດເລືອກຮອບທີ 2) ສຳພາດໂດຍອາຈານ ຈາກມະຫາວິທະຍາໄລ ໃນຊ່ວງທ້າຍເດືອນ ກຸມພາ 2025;
- (ການຄັດເລືອກຮອບທີ 3) ສຳພາດໂດຍຄະນະກຳມະການຈັດຕັ້ງທຶນ JDS ພາຍໃນ ເດືອນມີນາ 2025;
- (ຫຼັງການຄັດເລືອກ) ສຳລັບຜູ້ໄດ້ຮັບທຶນ ແມ່ນຈະໄດ້ຝຶກອົບຮົມ ພາສາອັງກິດ ແລະ ພາສາຍີ່ປຸ່ນ ກ່ອນການເດີນທາງ ໃນລະຫວ່າງເດືອນ ພຶດສະພາ - ກໍລະກົດ 2025;
- ຜູ້ທີ່ໄດ້ຮັບທຶນ ຈະຕ້ອງໄດ້ເດີນທາງປະໄປປະເທດ ຍີ່ປຸ່ນ ພາຍໃນເດືອນ ສິງຫາ 2025.

ໝາຍເຫດ:

1. ຫ້ອງການອົງການ JICE JDS ຈະໄດ້ຈັດສຳມະນາອະທິບາຍກ່ຽວກັບລາຍລະອຽດ ແລະ ວິທີການສະໝັກທຶນດັ່ງກ່າວຕາມ ວັນເວລາ ແລະ ສະຖານທີ່ ດັ່ງລຸ່ມນີ້:
   - ➢ ວັນທີ 14 ກັນຍາ 2024, ທີ່ Newrose Hotel, ນະຄອນຫຼວງວຽງຈັນ;
   - ➢ ວັນທີ 03 ຕຸລາ 2024, ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ;
   - ➢ ວັນທີ 08 ຕຸລາ 2024, ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງຈຳປາສັກ;
   - ➢ ວັນທີ 10 ຕຸລາ 2024, ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງສະຫວັນນະເຂດ.

   ສຳລັບເວລາ ແລະ ສະຖານທີ່ ອາດມີການປ່ຽນແປງ ກະລຸນາຕິດຕາມລາຍລະອຽດ ໃນເພຈ ເຟດບຸກ ຂອງ ຫ້ອງການອົງການ JICE JDS (https://www.facebook.com/jds.laos/).
2. ວັນທີ 16 ກັນຍາ 2024, ທີ່ ກົມຈັດຕັ້ງ ແລະ ພະນັກງານ, ກະຊວງກະສິກຳ ແລະ ປ່າໄມ້ ຫ້ອງການອົງການ JICE JDS ຈະຈັດສຳມະນາ ຖາມຕອບຄຳຖາມ ແລະ ໃຫ້ຂໍ້ມູນກ່ຽວກັບທຶນດັ່ງກ່າວ ສຳລັບພະນັກງານ ທີ່ ມີຄວາມສົນໃຈຢາກໄປຍົກລະດັບ ຢູ່ປະເທດຍີ່ປຸ່ນ ແລະ ພະນັກງານ ທີ່ຮັບຜິດຊອບໃນການສ້າງແຜນພັດທະນາຊັບພະຍາກອນມະນຸດ, ສະນັ້ນ, ຈຶ່ງເຊີນພະນັກງານ ແລະ ຕ່າງໜ້າຈາກ ບັນດາກົມ, ສະຖາບັນ, ວິທະຍາໄລ ທີ່ ຂຶ້ນກັບກະຊວງ ກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມ ແລະ ແຈ້ງລາຍຊື່ຜູ້ເຂົ້າຮ່ວມ ໃຫ້ກົມຈັດຕັ້ງ ແລະ ພະນັກງານ ໃນເວລາອັນຄວນດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ຫົວໜ້າກົມ**

ກົມຈັດຕັ້ງ ແລະ ພະນັກງານ ກະຊວງກະສິກຳ ແລະ ປ່າໄມ້

ບຸນທະວີ ໄຊຍະເພັດ

ສຳເນົາບ່ອນສົ່ງ:
- ພະແນກ ຄພຊ 01 ສະບັບ
- ເກັບມ້ຽນ 01 ສະບັບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ 4499 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 26 ສິງຫາ 2024

ກະຊວງກະສິກຳ ແລະ ປ່າໄມ້
ຂາເຂົ້າ ເລກທີ 2087
ວັນທີ 29.8.24
ເວລາ...

# ແຈ້ງການ

**ຮຽນ:** ທ່ານ ຫົວໜ້າຫ້ອງການ ກະຊວງກະສິກຳ ແລະ ປ່າໄມ້ ທີ່ນັບຖື.

**ເລື່ອງ:** ແຈ້ງທຶນການສຶກສາ ຂອງໂຄງການທຶນການສຶກສາເພື່ອພັດທະນາຊັບພະຍາກອນມະນຸດ ປີ 2024 (The Project for Human Resources Development Scholarship - JDS 2024).

ຫ້ອງການ ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການເປີດຮັບສະໝັກທຶນການສຶກສາໃນລະດັບປະລິນຍາໂທ ແລະ ປະລິນຍາເອກ JDS (ປະລິນຍາເອກ ແມ່ນສຳລັບຜູ້ຈົບປະລິນຍາໂທ ຈາກ JDS) ເພື່ອໄປສຶກສາທີ່ປະເທດຍີ່ປຸ່ນ ໃນສົກປີ 2025-2026 ຂອງໂຄງການທຶນການສຶກສາເພື່ອພັດທະນາຊັບພະຍາກອນມະນຸດ ໂດຍທຶນຊ່ວຍເຫຼືອລ້າຂອງລັດຖະບານຍີ່ປຸ່ນ ນັບຕັ້ງແຕ່ວັນທີ **26 ສິງຫາ - 16 ຕຸລາ ປີ 2024** (ທ່ານສາມາດອ່ານລາຍລະອຽດເພີ່ມເຕີມໃນຄຳແນະນຳການສະໝັກທຶນ - JDS Application Guidelines ທີ່ໄດ້ຄັດຕິດມາພ້ອມທາງດ້ານຫຼັງນີ້ ແລະ ຕິດຕາມຂ່າວສານລ່າສຸດໃນເພຈເຟດບຸກ JDS Laos).

ເພື່ອເປັນການສ້າງຄວາມເຂົ້າໃຈກ່ຽວກັບທຶນການສຶກສາ JDS ຫຼາຍຂຶ້ນ, ພວກເຮົາຈຶ່ງຂໍຄວາມຮ່ວມມືຈາກທ່ານ ໃນການໂຄສະນາ-ເຜີຍແຜ່ຂໍ້ມູນກ່ຽວກັບທຶນ JDS ໃຫ້ກັບພະນັກງານໃນອົງການຈັດຕັ້ງທ່ານໄດ້ຮັບຊາບ ນັບແຕ່ຂັ້ນສູນກາງ ຫາຂັ້ນແຂວງ (ບໍ່ລວມຂັ້ນເມືອງ) ພ້ອມທັງຊຸກຍູ້ໃຫ້ພະນັກງານເຂົ້າຮ່ວມໃນງານສຳມະນາອະທິບາຍກ່ຽວກັບທຶນ JDS ທີ່ຈະຖືກຈັດຂຶ້ນຕາມວັນເວລາ ແລະ ສະຖານທີ່ລຸ່ມນີ້:

1. **ທີ່ນະຄອນຫຼວງວຽງຈັນ:** ວັນທີ 14 ກັນຍາ 2024 (ວັນເສົາ).
2. **ທີ່ແຂວງຫຼວງພະບາງ:** ວັນທີ 3 ຕຸລາ 2024 (ວັນພະຫັດ), ທີ່ ພະແນກ ສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ.
3. **ທີ່ແຂວງຈຳປາສັກ:** ວັນທີ 8 ຕຸລາ 2024 (ວັນອັງຄານ), ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງຈຳປາສັກ.
4. **ທີ່ແຂວງສະຫວັນນະເຂດ:** ວັນທີ 10 ຕຸລາ 2024 (ວັນພະຫັດ), ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງສະຫວັນນະເຂດ.

- ລາຍລະອຽດເວລາ ແລະ ສະຖານທີ່ອາດຈະມີການປ່ຽນແປງພາຍຫຼັງ, ກະລຸນາຕິດຕາມໃນເພຈເຟດບຸກ JDS Laos ສຳລັບຂ່າວສານລ່າສຸດ

ເນື່ອງໃນໂອກາດດຽວກັນນີ້, ພວກເຮົາສະເໜີຂໍຄວາມຮ່ວມມືຈາກທ່ານ ໃນການສະເໜີໃຫ້ກົມຈັດຕັ້ງ ແລະ ພະນັກງານ ຫຼື ພາກສ່ວນທີ່ກ່ຽວຂ້ອງໃນອົງການຈັດຕັ້ງຂອງທ່ານ ຊ່ວຍເຊັນຢັ້ງຢືນໃນເອກະສານ "Nomination Letter" ໃຫ້ແກ່ພະນັກງານທີ່ມີເງື່ອນໄຂຖືກຕ້ອງໃນອົງການຈັດຕັ້ງຂອງທ່ານ ເພື່ອປະກອບເປັນເອກະສານໃນການສະໝັກທຶນ ພາຍໃນກຳນົດເວລາຮັບສະໝັກຂ້າງເທິງດ້ວຍ.

**ໝາຍເຫດ:** ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ເບີໂທ ແລະ ຊ່ອງທາງການຕິດຕໍ່ ດັ່ງທາງດ້ານລຸ່ມນີ້:

**ຂໍ້ມູນຕິດຕໍ່ ຫ້ອງການ ໂຄງການ JICE JDS ປະຈຳ ສ.ປ.ປ.ລາວ**
ຊັ້ນ 1, ຕຶກກະຊວງສຶກສາທິການ ແລະ ກິລາ ເຂດສະໜາມກິລາເຈົ້າອານຸວົງ
ໂທລະສັບຕັ້ງໂຕະ: 021 251430, ມືຖື & WhatsApp: 020 55519802, 020 57529955
ອີເມວ: jds.laos@jice.org, Facebook: https://www.facebook.com/jds.laos/,
ເວບໄຊຂໍ້ມູນລະອຽດ ເພື່ອດາວໂຫຼດ ແລະ ຍື່ນຟອມອອນລາຍ: https://jds-scholarship.org/country/laos/index.html

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ໃນນາມຫົວໜ້າຫ້ອງການ

ສຸພາບ ຄູນວິໄຊ

*ເອກະສານຄັດຕິດ:*

- *ລາຍຊື່ອົງການຈັດຕັ້ງເປົ້າໝາຍຂອງທຶນ.*
- *ເງື່ອນໄຂການສະໝັກ.*
- *ປຶ້ມຄູ່ມືການສະໝັກທຶນ.*

*ກະລຸນາສົ່ງຕໍ່:*

- *ກົມຈັດຕັ້ງ ແລະ ພະນັກງານ, ບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າ.*
- *ກົມກໍ່ສ້າງພະນັກງານ ຄະນະຈັດຕັ້ງສູນກາງພັກ.*
- *ກົມພົວພັນຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ.*
- *ກົມຮ່ວມມືສາກົນ, ອົງການກວດສອບແຫ່ງລັດ.*
- *ຄະນະກຳມາທິການແຫ່ງຊາດ ເພື່ອພັດທະນາຊັບພະຍາກອນມະນຸດ.*

# ເງື່ອນໄຂການສະໝັກທຶນ (ທຶນປະລິນຍາໂທ) JDS 2024

**ເງື່ອນໄຂການສະໝັກ**

| | |
|---|---|
| **ສັນຊາດ** | ສັດຊາດລາວ |
| **ອາຍຸ** | ອາຍຸລະຫວ່າງ 22-39 ປີ ກ່ອນວັນທີ 1 ເດືອນ 4 ປີ 2025 (ເກີດໃນມື້/ຫຼັງຈາກ ວັນທີ 2 ເດືອນ 4 ປີ 1985 *ແລະ* ໃນມື້/ກ່ອນ ວັນທີ 1 ເດືອນ 4 ປີ 2003) |
| **ພື້ນຖານການສຶກສາ** | - ຈົບການສຶກສາລະດັບປະລິນຍາຕີຈາກມະຫາວິທະຍາໄລທີ່ຜ່ານການຢັ້ງຢືນໂດຍລັດຖະບານ ສ.ປ.ປ.ລາວ ຫຼື ຕ່າງປະເທດ. |
| **ປະສົບການເຮັດວຽກ** | - ປະຈຸບັນເປັນພະນັກງານລັດຖະກອນສັງກັດຢູ່ອົງການຈັດຕັ້ງເປົ້າໝາຍ.<br>(ລັດຖະກອນທີ່ເຮັດວຽກຢູ່ພາຍໃນຂັ້ນສູນກາງ, ພະແນກການນະຄອນຫຼວງ ແລະ ຂັ້ນແຂວງ, ໂດຍບໍ່ລວມເອົາຂັ້ນເມືອງ)<br>- ມີປະສົບການເຮັດວຽກຢ່າງໜ້ອຍ 2 ປີ. |
| **ຄວາມສາມາດດ້ານພາສາອັງກິດ** | ມີທັກສະໃນການຂຽນ ແລະ ເວົ້າພາສາອັງກິດໄດ້ດີ ໃນລະດັບປະມານຄະແນນ TOEFL 500, TOEIC520, IELTS 4.5 ຂຶ້ນໄປຈະເປັນການດີ (ບໍ່ຈຳເປັນຕ້ອງມີໃບຄະແນນ).<br>*ບາງມະຫາໄລແນະນຳໃຫ້ນັກສຶກສາທີ່ຈະສະໝັກມີທັດສະພາສາອັງກິດໃນລະດັບດັ່ງລຸ່ມນີ້:<br>University of Tsukuba, Hiroshima University(CP1-1) : TOEIC 520 (≒TOEFL 500)<br>Ritsumeikan University : TOEIC 520 (≒TOEFL 500), IELTS 4.5<br>Yamaguchi University : TOEIC 730 (≒TOEFL iBT 78), IELTS 5.5 |
| **ສຸຂະພາບ** | ສຸຂະພາບ ຮ່າງກາຍ ແລະ ຈິດໃຈ ສົມບູນ. |
| **ຜູ້ບໍ່ມີເງື່ອນໄຂສະໝັກ** | ຜູ້ທີ່ບໍ່ສາມາດສະໝັກທຶນ JDS:<br>- ຜູ້ທີ່ກຳລັງຖືກຄັດເລືອກ ຫຼື ໄດ້ຮັບທຶນການສຶກສາຈາກທຶນອື່ນ.<br>- ຜູ້ທີ່ຮຽນຈົບປະລິນຍາໂທຈາກຕ່າງປະເທດພາຍໃຕ້ທຶນການສຶກສາໃດໜຶ່ງມາແລ້ວ.<br>- ຜູ້ທີ່ສຶກສາຢູ່ຕ່າງປະເທດເປັນເວລາດົນກວ່າ 1 ປີ ພາຍໃຕ້ທຶນການສຶກສາໃດໜຶ່ງ ແລະ ກັບມາລາວບໍ່ຮອດ 2 ປີ ຫຼື ຕໍ່າກວ່ານັ້ນ. (ຢ່າງໜ້ອຍກັບມາອາໄສຢູ່ລາວຈາກປີ 2022 ຮອດປະຈຸບັນ)<br>- ມີລາຍຊື່ ຫຼື ລົງທະບຽນກ່ຽວກັບການເຄື່ອນໄຫວທາງການທະຫານ. |
| **ອື່ນໆ** | ຜູ້ທີ່ໄດ້ຮັບທຶນຕ້ອງໄດ້ເຊັນສັນຍາຕົກລົງກ່ຽວກັບເງື່ອນໄຂທີ່ຈຳເປັນໃນເມື່ອໄດ້ຮັບທຶນການສຶກສາພາຍໃຕ້ໂຄງການ JDS.<br>ນັກສຶກສາທຶນ JDS ຈຳເປັນຕ້ອງໄດ້ກັບຄືນປະເທດ ແລະ ເຮັດວຽກພາຍໃນ ສ.ປ.ປ.ລາວ ຢ່າງໜ້ອຍ 2 ເທົ່າຂອງໄລຍະການຮຽນ (4 ປີ) ເພື່ອຊ່ວຍໃນການພັດທະນາ ສ.ປ.ປ.ລາວ ຜ່ານການເຮັດວຽກຂອງພວກເຂົາໃນອົງການຈັດຕັ້ງເປົ້າໝາຍ, ພ້ອມກັບປະຕິບັດຕາມຂໍ້ຕົກລົງຂອງກະຊວງສຶກສາທິການ ແລະ ກິລາ. |

**ຂັ້ນຕອນການສະໝັກ**

- ລົງທະບຽນ ແລະ ດາວໂຫຼດເອກະສານສະໝັກທັງໝົດໄດ້ໃນເວບໄຊທ໌ JDS (https://jds-scholarship.org/)
- ຕື່ມແບບຟອມອອນລາຍ ແລະ ອັບໂຫຼດເອກະສານປະກອບການສະໝັກທຶນໃນລິ້ງດ້ານເທິງ ກ່ອນວັນທີ **16 ຕຸລາ, 2024.**
- ເອກະສານປະກອບການສະໝັກທຶນມີ:
  - ບົດ essay ສັ້ນ.
  - ແຜນບົດຄົ້ນຄວ້າ (Research plan).
  - ສຳເນົາໃບປະກາດ ແລະ ໃບຄະແນນຈົບມະຫາວິທະຍາໄລ (ພ້ອມຢັ້ງຢືນກາແດງໃສ່ໃນສະບັບສຳເນົາ).
  - ໜັງສືອ້າງອີງຈາກຜູ້ຊີ້ນຳບ່ອນເຮັດວຽກ (Reference Letter).
  - ໜັງສືນຳສົ່ງ ຈາກກົມຈັດຕັ້ງ ແລະ ພະນັກງານ/ພາກສ່ວນກ່ຽວຂ້ອງ (Official Nomination Letter).

**ຕາຕະລາງການຄັດເລືອກ**

- (ກ່ອນການຄັດເລືອກ) ສອບເສັງພາສາ IELTS ແລະ ຄະນິດສາດ ປະມານວັນທີ 21-23 ພະຈິກ 2024 (ຟຣີ).
- (ການຄັດເລືອກຮອບທີ 1) ຄັດເລືອກເອກະສານໂດຍ ມະຫາວິທະຍາໄລ: ທັນວາ 2024-ມັງກອນ 2025
- (ການຄັດເລືອກຮອບທີ 2) ສຳພາດໂດຍອາຈານຈາກມະຫາວິທະຍາໄລ: ທ້າຍເດືອນກຸມພາ 2025.
- (ການຄັດເລືອກຮອບທີ 3) ສຳພາດໂດຍຄະນະກຳມະການຈັດຕັ້ງທຶນ JDS: ຕົ້ນເດືອນ-ກາງເດືອນມີນາ, 2025.
- (ຫຼັງການຄັດເລືອກ) ຝຶກອົບຮົມ ພາສາອັງກິດ ແລະ ພາສາຍີ່ປຸ່ນກ່ອນການເດີນທາງ: ເດືອນ ພຶດສະພາ - ກໍລະກົດ 2025.
- ຜູ້ທີ່ໄດ້ຮັບທຶນເດີນທາງໄປປະເທດຍີ່ປຸ່ນ ເດືອນ ສິງຫາ 2025.

# ລາຍຊື່ ແລະ ຂົງເຂດອົງການຈັດຕັ້ງທີ່ສາມາດສະໝັກທຶນ JDS2024 ໄດ້

<table>
<tr><th>ອົງການຈັດຕັ້ງ</th><th>ຂອບເຂດທີ່ສາມາດສະໝັກໄດ້</th></tr>
<tr><td>1. ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ.</td><td>• ສະເພາະພະນັກງານໃນອົງການຈັດຕັ້ງດັ່ງກ່າວ</td></tr>
<tr><td>2. ຫ້ອງວ່າການນະຄອນຫຼວງ ວຽງຈັນ/ຫ້ອງວ່າການແຂວງ</td><td>• ພະນັກງານທີ່ເຮັດວຽກຢູ່ພາຍໃນຫ້ອງວ່າການນະຄອນຫຼວງວຽງຈັນ ແລະ ຫ້ອງວ່າການແຂວງເທົ່ານັ້ນ (ບໍ່ລວມພະແນກການຂັ້ນເມືອງ/ຫ້ອງການເມືອງ).</td></tr>
<tr><td>3. ຄະນະຈັດຕັ້ງສູນກາງພັກ.</td><td rowspan="19">• ພະນັກງານທີ່ຢູ່ສູນກາງນະຄອນຫຼວງວຽງຈັນ.<br>• ພະນັກງານໃນພະແນກການນະຄອນຫຼວງວຽງຈັນ.<br>• ພະນັກງານໃນພະແນກການຂັ້ນແຂວງ/ພາກ ທົ່ວປະເທດ(ບໍ່ລວມພະແນກການຂັ້ນເມືອງ).<br>• ພະນັກງານໃນສະຖາບັນ ແລະ ສູນ ຕ່າງໆທີ່ຂຶ້ນກັບສາຍຕັ້ງກະຊວງດັ່ງກ່າວ.</td></tr>
<tr><td>4. ກະຊວງ ການຕ່າງປະເທດ</td></tr>
<tr><td>5. ກະຊວງ ພາຍໃນ</td></tr>
<tr><td>6. ກະຊວງແຜນການ ແລະ ການລົງທຶນ</td></tr>
<tr><td>7. ກະຊວງ ຍຸຕິທຳ</td></tr>
<tr><td>8. ສານປະຊາຊົນສູງສຸດ</td></tr>
<tr><td>9. ອົງການໄອຍະການປະຊາຊົນສູງສຸດ</td></tr>
<tr><td>10. ສະພາແຫ່ງຊາດ ແຫ່ງ ສ.ປ.ປ.ລາວ</td></tr>
<tr><td>11. ກະຊວງ ການເງິນ</td></tr>
<tr><td>12. ທະນາຄານແຫ່ງ ສ.ປ.ປ.ລາວ</td></tr>
<tr><td>13. ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ</td></tr>
<tr><td>14. ກະຊວງ ໂຍທາທິການ ແລະ ຂົນສົ່ງ</td></tr>
<tr><td>15. ກະຊວງ ກະສິກຳ ແລະ ປ່າໄມ້</td></tr>
<tr><td>16. ກະຊວງ ອຸດສາຫະກຳ ແລະ ການຄ້າ</td></tr>
<tr><td>17. ກະຊວງ ພະລັງງານ ແລະ ບໍ່ແຮ່</td></tr>
<tr><td>18. ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ.</td></tr>
<tr><td>19. ອົງການກວດສອບແຫ່ງລັດ</td></tr>
<tr><td>20. ສະຖາບັນວິທະຍາສາດ, ເສດຖະກິດ ແລະ ສັງຄົມແຫ່ງຊາດ.</td></tr>
<tr><td>21. ກະຊວງປ້ອງກັນຄວາມສະຫງົບ</td></tr>
<tr><td>22. ກະຊວງ ສາທາລະນະສຸກ</td><td>• ພະນັກງານທີ່ຢູ່ສູນກາງນະຄອນຫຼວງວຽງຈັນ.<br>• ພະນັກງານໃນພະແນກການນະຄອນຫຼວງວຽງຈັນ.<br>• ພະນັກງານໃນພະແນກການຂັ້ນແຂວງ ທົ່ວປະເທດ.<br>• ພະນັກງານໃນສະຖາບັນ ແລະ ສູນ ຕ່າງໆຂອງກະຊວງ.<br>• ພະນັກງານ-ແພດໝໍພາກລັດ ໃນທຸກໂຮງໝໍທີ່ຂຶ້ນກັບກະຊວງສາທາລະນະສຸກ ຢູ່ສູນກາງ-ພະແນກການນະຄອນຫຼວງວຽງຈັນ ແລະ ຂັ້ນແຂວງທົ່ວປະເທດ (ບໍ່ລວມພະແນກການຂັ້ນເມືອງ).</td></tr>
</table>

| ອົງການຈັດຕັ້ງ | ຂອບເຂດທີ່ສາມາດສະໝັກໄດ້ |
|---|---|
| 23. ກະຊວງ ສຶກສາທິການ ແລະ ກິລາ | • ພະນັກງານທີ່ຢູ່ສູນກາງນະຄອນຫຼວງວຽງຈັນ.<br>• ພະນັກງານໃນພະແນກການນະຄອນຫຼວງວຽງຈັນ..<br>• ພະນັກງານໃນພະແນກການຂັ້ນແຂວງແຕ່ລະແຂວງ ທົ່ວປະເທດ.<br>• ພະນັກງານໃນສະຖາບັນ ແລະ ສູນ ຕ່າງໆທີ່ຂຶ້ນກັບສູນກາງ ຫຼື ພະແນກການຂັ້ນແຂວງ.<br>• ລວມເອົາ ມະຫາວິທະຍາໄລແຫ່ງຊາດ ແລະ 3 ມະຫາວິທະຍາໄລແຂວງ.<br>• ລວມເອົາ ວິທະຍາໄລຕ່າງໆ ຂອງພາກລັດ.<br>• ລວມເອົາໂຮງຮຽນເຕັກນິກວິຊາຊີບຂອງພາກລັດ. |
| 24. ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | • ພະນັກງານທີ່ຢູ່ສູນກາງນະຄອນຫຼວງວຽງຈັນ.<br>• ພະນັກງານໃນພະແນກການນະຄອນຫຼວງວຽງຈັນ..<br>• ພະນັກງານໃນພະແນກການຂັ້ນແຂວງ ທົ່ວປະເທດ.<br>• ພະນັກງານໃນສະຖາບັນ ແລະ ສູນ ຕ່າງໆທີ່ຂຶ້ນກັບສູນກາງ ຫຼື ພະແນກການຂັ້ນແຂວງ.<br>• ລວມທັງສື່ພາກລັດຕ່າງໆ ເຊັ່ນ: ໂທລະພາບແຫ່ງຊາດລາວ, ວິທະຍຸແຫ່ງຊາດ, ພາກສ່ວນໜັງສືພິມ ແລະ ວາລະສານ. |
| 25. ສະຖາບັນ ການເມືອງ ແລະ ການປົກຄອງແຫ່ງຊາດ | • ພະນັກງານໃນສະຖາບັນ ນະຄອນຫຼວງວຽງຈັນ.<br>• ໂຮງຮຽນການເມືອງການປົກຄອງແຂວງ. |

*** <u>ໝາຍເຫດ:</u>**

- ແນະນຳໃຫ້ຜູ້ສະໝັກທຸກທ່ານເລືອກສະໝັກສາຂາຮຽນທີ່ກົງກັບໜ້າວຽກທີ່ຜູ້ກ່ຽວຮັບຜິດຊອບ.
- ແນະນາໃຫ້ຜູ້ສະໝັກຍື່ນຟອມສະໝັກບໍ່ໃຫ້ກາຍມື້ປິດຮັບສະໝັກທີ່ການົດ (ວັນທີ 16 ຕຸລາ ປີ 2024)

# Preparatory Training for English and Math test (Optional)

Preparatory training for English and Math will be provided to applicants before the test.

**English Training**

- Practice the format and question types for IELTS tests
- Practice time management and analysis patterns for correct answers

Venue: **Vientiane College**

Schedule: **October 28 – November 20, 17:00 – 18:30 (Mon-Fri)**

| Date and Time | Program |
|---|---|
| October 4th and 21st | Application Deadline for English Training |
| October 8th and 23rd, 8:30 – 11:30 | Writing Level Check Test (Speaking Interview in the afternoon 15mn/person) |
| October 25th | Announce the result of Level Check Test |
| October 28 – November 20 | English Training |

Application Deadline for English Training: **<u>October 21st (Mon) 2024</u>**

Please confirm in the online application website by the deadline.

<Notes>

* The online class is available for provincial applicants
* To attend the training, applicants need to take Writing Test and Speaking Interview (online test and interview is available for provincial applicants).
* Please kindly inform us in advance if you have the valid TOEFL/TOEIC/IELTS score, so we can consider if you can join the course without level check test.
* **Only for those who passed the level check test can attend the training.**

---

**Math Tutoring (Tentative)**

- Review basic math and practice worksheet
- Solve past exam

Venue: Pending

Schedule: November (will be noticed soon)

* No test is required to attend Math training.